# ຈໍຣະນີ ແລະ ລູກແມງແຄງສີຂຽວ





ໂດຍ: ບ໊ອບ ມາຕິນ (Bob Martin)
ແລະ
ເດບໍຣາ ໄວທ໌ (Deborah White)

Australian Government
Australian Centre for
International Agricultural Research



ສູນວິໄຈກະສິກຳສາກົນ ແຫ່ງອົດສະຕຣາລີ (ACIAR) ສ້າງຕັ້ງຂຶ້ນເມື່ອ ເດືອນ ມິຖຸນາ 1982 ຕາມຂໍ້ຕົກລົງ ຂອງສະພາແຫ່ງຊາດ ອົດສະຕຣາລີ. ACIAR ເຄື່ອນໄຫວໃນຖານະ ສ່ວນໜຶ່ງຂອງໂຄງການຮ່ວມມື ເພື່ອການ ພັດທະນາສາກົນ ຂອງປະເທດ ອົດສະຕຣາລີ ດ້ວຍພາລະກິດ ເພື່ອສ້າງ ລະບົບການກະສິກຳ ທີ່ມີປະສິດທິຜົນແລະຍືນຍົງ ເພື່ອປະໂຫຍດຂອງ ບັນດາປະເທດກຳລັງພັດທະນາ ແລະ ອົດສະຕຣາລີ. ສູນມອບໝາຍໃຫ້ນັກ ຄົ້ນຄວ້າ ຈາກອົດສະຕຣາລີ ແລະປະເທດກຳລັງພັດທະນາ ຮ່ວມກັນວິໄຈ ໃນຂົງເຂດວຽກງານທີ່ປະເທດອົດຕຣາລີ ມີຄວາມຊ່ຽວຊານ. ACIAR ຍັງ ເປັນຜູ່ສະໜອງຜົນການຄົ້ນຄວ້າ ໃຫ້ກັບສູນວິໄຈກະສິກຳສາກົນ (International Agriculture Research Centre) ນຳອີກ.



## ຊຸດຜົນການວິໄຈ ຂອງ ACIAR

ຜົນງານຊຸດນີ້ ແມ່ນຜົນການວິໄຈ ເຊິ່ງໄດ້ຮັບທຶນສະໜັບສະໜູນ ຈາກ ACIAR ຫຼື ແມ່ນ ແນວຄວາມຄິດເພື່ອການຄົ້ນຄວ້າ ແລະເປັນເປົ້າໝາຍເພື່ອການພັດທະນາ ຂອງ ACIAR. ຊຸດຜົນງານດັ່ງກ່າວ ກະຈາຍໄປທົ່ວໂລກ ໂດຍເນັ້ນໄປທີ່ ບັນດາປະເທດກຳລັງພັດທະນາ.

© Australian Centre for International Agriculture Research (ACIAR) 2011
This work is copyright. Apart from any use as permitted under the Copyright Act 1968, no part may be produced by any process without prior written permission from ACIAR,
GPO Box 1571, Canberra Act 2601, Australia, aciar@aciar.gov.au

Martin B. and White D. 2011. Jorani and the green vegetable bugs. ACIAR Monograph No. 137b 48 pp.

Originally published in English and Khmer, as ACIAR Monographs Nos 137 and 137a, in 2009

ແປເປັນພາສາລາວ ໂດຍ: ສຸກພັນສາ ພູຜາສຸກ (Soukphansa Phouphasouk)
ກວດແກ້ບົດແປ ໂດຍ: ດາຣາ ກັນລະຍາ (Dara Kanlaya)
ISBN 978 1 921738 56 2 (ຈັດພິມ)
ISBN 978 1 921738 57 9 (online)
ອອກແບບ ໂດຍ: ເຊີຣິລ ຄໍລິນ (Cheryl Collins Design)
ຈັດໜ້າພາສາລາວ ໂດຍ: ບໍລິສັດ ດອກເກດ ການພິມ (Dokked Publishing Company)
ພິມທີ່: ປານຄຳ ຈຳປາ (Pankham Jampa)
ຮູບແຕ້ມ ໂດຍ: ບອບ ມາຕິນ (Bob Martin)



# ຈໍຣະນີ ແລະ ລູກແມງແຄງສີຂຽວ

ໂດຍ: ບ໊ອບ ມາຕິນ (Bob Martin)
ແລະ
ເດບໍຣາ ໄວທ໌ (Deborah White)



ACIAR
www.aciar.gov.au

ຄ.ສ.໒໐໑໑

# ບົດນຳ

ຊາວສວນກຳປູເຈຍຫຼາຍຄົນ ປູກຖົ່ວເຫຼືອງເປັນອາຊີບ ບັນຫາເກີດຂຶ້ນ ເມື່ອແມງໄມ້ສັດຕູພືດທຳລາຍຖົ່ວເຫຼືອງທີ່ປູກ ຢ່າງໜັກໜ່ວງ ສັດຕູພືດທີ່ອັນຕະລາຍທີ່ສຸດ ແມ່ນລູກແມງແຄງສີຂຽວ ໂຕທີ່ເຈາະຝັກຖົ່ວເພື່ອດູດອາຫານ.

ຊາວສວນມັກຈະໃຊ້ຢາຂ້າແມງໄມ້ ແຕ່ເຂົາຜັດບໍ່ຮູ້ຈັກການໃຊ້ຢ່າງປອດໄພ ເພາະຄຳເຕືອນຕ່າງໆບໍ່ໄດ້ຂຽນເປັນພາສາຂະແມ ຜົນຄື ຊາວສວນບໍ່ຮູ້ວ່າຈະຕ້ອງໃຊ້ໜ້ອຍຫຼາຍ ແລະສີດຖີ່ຊ່ຳໃດ ເຂົາເຈົ້າບໍ່ຮູ້ອີກວ່າຈະຕ້ອງໃສ່ເສື້ອຜ້າແລະອຸປະກອນປ້ອງກັນ ເພື່ອບໍ່ໃຫ້ສານພິດເປັນອັນຕະລາຍຕໍ່ຕົນເອງ ແລະສິ່ງແວດລ້ອມ.

ບັນຫາໜັກຂຶ້ນຕື່ມ ເພາະມີຊາວສວນຈຳນວນໜ້ອຍດຽວ ທີ່ຮູ້ຈັກເຝົ້າສັງເກດ ແລະເຫັນວ່າ ແມງໄມ້ຊະນິດໃດແທ້ ທີ່ເປັນອັນຕະລາຍຕໍ່ສວນຂອງເຂົາເຈົ້າ. ແມງໄມ້ທຸກຊະນິດເລີຍຖືກພົ່ນຢາຂ້າແມງໄມ້. ນີ້ແຮ່ງອັນຕະລາຍ ເພາະເມື່ອແມງໄມ້ສັດຕູພືດຄືນມາ ມັນສາມາດທຳລາຍສວນຢ່າງງ່າຍດາຍ ເພາະສັດຕູຂອງມັນຕາຍໝົດແລ້ວ.

ເລື່ອງທີ່ເກີດຂຶ້ນຢູ່ບ້ານ ສຳລວດ ພາກເໜືອຂອງກຳປູເຈຍນີ້ ສະເໜີອີກທາງເລືອກນຶ່ງ ເພື່ອຈະບໍ່ຕ້ອງໃຊ້ຢາຂ້າແມງໄມ້ເກີນຄວາມຈຳເປັນ ໃນສວນຖົ່ວເຫຼືອງ ແລະສວນອື່ນໆ. ອັນນີ້ເອີ້ນວ່າ ການຄວບຄຸມແມງໄມ້ແບບບູຣະນາການ (IPM)* ເຊິ່ງຈະຊ່ວຍຫຼຸດຜ່ອນ ການໃຊ້ຢາຂ້າແມງໄມ້ໃນສວນໄດ້.

* ສາມາດເບິ່ງລາຍລະອຽດກ່ຽວກັບ IPM ໄດ້ ຢູ່ໜ້າ ໔໗.











“ອິຫຍັງນ໊ະ ສະເຣດ?” ຈໍຣະນີ ຖາມ ນ້ອງຊາຍ.

ສະເຣດເອົາແມງໄມ້ສີຂຽວທີ່ຈັບໄດ້ຢູ່ສວນ ໃຫ້ເອື້ອຍ ແລະໝູ່ຊື່ ຣັດຕະນັກ ເບິ່ງ. ແມງໄມ້ສີຂຽວວິນໄປວິນມາໃນກັບຢາງ. ສະເຣດຍົກກັບຢາງຂຶ້ນໃຫ້ເອື້ອຍ ແລະ ໝູ່ໄດ້ເບິ່ງແຈ້ງໆ.







"ໂອ້, ມັນແມ່ນແມງແຄງສີຂຽວ, ຂ້ອຍບໍ່ໄດ້ເຫັນດົນແລ້ວ ຕັ້ງແຕ່ເຮົາປ່ຽນວິທີເບິ່ງແຍງສວນ. ພໍ່ເຄີຍສີດຢາຂ້າແມງໄມ້ ເພາະຢ້ານມັນທຳລາຍສວນໝາກຖົ່ວເຫຼືອງ."

"ແປວ່າສວນຂອງເຮົາພວມຈະຖືກທຳລາຍຫວ໋າ?"









"ບໍ່ດອກ ສະເຣດ, ສວນຂອງເຮົາບໍ່ເປັນຫຍັງ ດອກ, ຂ້ອຍຊິບອກວ່າຍ້ອນຫຍັງ."

"ບ້ານສຳລວດຂອງເຮົາ ເປັນບ້ານປູກ ຖົ່ວເຫຼືອງ ແລະມີແມງໄມ້ຫຼາຍຄືກັນ, ແມງ ອັນນີ້ລະ ມັນມັກເຈາະຝັກໝາກຖົ່ວເອົາແທ້."

"ຫຼາຍຄອບຄົວສີດຢາຂ້າແມງໄມ້ເພື່ອປາບ ມັນ ແຕ່ບໍ່ແມ່ນວ່າຈະໄດ້ຜົນຕະຫຼອດ. ພໍ່ກັບ ແມ່ກໍເຄີຍຄິດວ່າ ສີດຢາເປັນວິທີທີ່ດີທີ່ສຸດ ແຕ່ຫຼັງຈາກປີທີ່ຖົ່ວເຫຼືອງຖືກທຳລາຍໜັກປີໜຶ່ງ ເພິ່ນເລີຍເລີ່ມຊອກວິທີອື່ນ."

"ໂຊກດີ ປີນັ້ນມີໄທບ້ານເຮືອນໜຶ່ງໄດ້ຖົ່ວ ຫຼາຍ ເຂົາເຈົ້າໃຫ້ຄຳແນະນຳ ແລະເລົ່າ ເລື່ອງທີ່ເຮົາບໍ່ເຄີຍລືມ..."





ພໍ່ດາຣາ ເມຍລາວຊື່ເຈັນດາ ກັບລູກສາວຊື່ທິດາ ເຮັດສວນຖົ່ວເຫຼືອງ. ຫຼາຍຕໍ່ຫຼາຍປີຜົນຜະລິດຜັດໜ້ອຍລົງໜ້ອຍລົງ. ປີນັ້ນເຂົາເຈົ້າຂາຍຖົ່ວໄດ້ໜ້ອຍທີ່ສຸດ.







ພໍ່ດາຣາໃຊ້ຄວາມພະຍາຍາມທີ່ສຸດ ລາວສີດຢາຂ້າແມງໄມ້ຫຼາຍເທື່ອ ເພື່ອໃຫ້ແມງໄມ້ທຸກໂຕ ທີ່ຈະເຮັດໃຫ້ໝາກຖົ່ວລີບນັ້ນ ຕາຍໝົດ.



ຮອດຍາມຝົນມາ ພໍ່ດາຣາບໍ່ສະບາຍ, ລາວໄອຫຼາຍ
ແລະບໍ່ແຂງແຮງຄືແຕ່ກ່ອນ.
ເດິກຄືນນັ້ນ ພໍ່ດາຣາກໍຖືກພາໄປໂຮງໝໍ.




AMBULANCE

ເມື່ອທິດາຕື່ນນອນຕອນເຊົ້າ
ແມ່ຢືນຢູ່ຕໍ່ໜ້າ ບອກວ່າ:

“ທິດາເອີ້ຍ... ມື້ຄືນນີ້... ພໍ່ໄປໂຮງໝໍ
ພໍ່ບໍ່ສະບາຍເດີ້ລູກ” ທິດາເວົ້າຫຍັງ
ບໍ່ອອກ ໄດ້ແຕ່ຄຶດກັງວົນ.

ຫຼາຍມື້ຜ່ານໄປ ທິດາແຮ່ງອຸກໃຈ
ຫຼາຍຂຶ້ນ ຍ້ອນຄຶດຮອດພໍ່ແຮງ.
ລາວເຮັດວຽກເຮືອນທຸກຢ່າງ
ຮຽບຮ້ອຍ ເພື່ອພໍ່ຈະດີໃຈ
ບາດອອກໂຮງໝໍມາ.



ສວາຍມື້ໜຶ່ງ ຂະນະທີ່ພວມເອົານ້ອງຢູ່ ທິດາຄຶດພໍ້ວ່າ
*‘ພໍ່ບໍ່ສະບາຍຢູ່ໂຮງໝໍ ແລ້ວໃຜຈະເບິ່ງສວນ?’*



“ຮອດຍາມປູກໝາກຖົ່ວເຫຼືອງ
ແລ້ວເດີລູກ”  ແມ່ບອກທິດາຫຼັງເລີກ
ມາແຕ່ໂຮງຮຽນ.

“ແຕ່ມັນກະຊິຖືກແມງໄມ້ກິນໄດ໋
ເຮົາບໍ່ມີຢາສີດຂ້າແມງໄມ້ແລ້ວ”
ທິດາທ້ວງຂຶ້ນ.

“ຟັງແມ່ເດີ  ຈັ່ງໃດເຮົາກະຕ້ອງປູກ
ເຮົາບໍ່ມີລາຍໄດ້ທາງອື່ນເລີຍ.”







ທິດາຟັງຄວາມແມ່, ລາວຊ່ອຍແມ່
ເອົາແນວໝາກຖົ່ວ ທີ່ເອົາໄວ້ແຕ່ປີ
ແລ້ວ ໄປປູກ ສອງແມ່ລູກຕ້ອງໃຊ້
ເວລາຫຼາຍມື້.

"ຂ້ອຍບໍ່ຍອມໃຫ້ເຈົ້າຕາຍດອກ"
ທິດາບອກເມັດໝາກຖົ່ວ
"ຂ້ອຍຊິເຝົ້າເບິ່ງເຈົ້າ ຖ້າເບິ່ງວ່າ
ໃຜມັນມາທຳລາຍພວກເຈົ້າ."





ທິດາເຝົ້າເບິ່ງແມງໄມ້ທີ່ໄຕ່ໄປມາຢູ່ຕົ້ນ
ໝາກຖົ່ວເຫຼືອງ ມື້ລະຫຼາຍຊົ່ວໂມງ.
ແຕ່ເບິ່ງຄືວ່າ ມັນບໍ່ໄດ້ເຮັດຫຍັງ.







ຮອດຍາມທີ່ຕ້ອງສີດຢາຂ້າແມງໄມ້ເທື່ອທຳອິດ
ທີດາແຮ່ງຄຶດຮອດພໍ່. ລາວຄຶດເຫັນພໍ່ໃສ່ໝວກສີຂາວ
ເສື້ອຫຼົມໆ ກັບໂສ້ງແນວມີຫຼາຍຖົງ
ແບກຖັງໃຫຍ່ເທິງຫຼັງ.



ມືຊ້າຍພໍ່ຖືບັ້ງສີດຢາວໆ ມືຂວາເໜັງກ້ານສູບ
ຂຶ້ນລົງ ສີດຢາອອກຈາກບັ້ງ.
ລາວເຮັດວຽກຫຼາຍ ຊົ່ວໂມງ
ຍ່າງເລາະທຸກແຖວໝາກຖົ່ວ ພົ່ນຢາ ຈົນທົ່ວ.

ແຕ່ປີນີ້ ບໍ່ມີພໍ່.

ຕອນຄໍ່າມາ ແມ່ເຈັນດາ ເອົາອັນໜຶ່ງມາໃຫ້ ທິດາເບິ່ງ ມັນແມ່ນ ສະຫວິງກວາດແມງໄມ້.





“ແມ່ເອົາມາໃຫ້ລູກ  ແມ່ຮູ້ວ່າລູກພວມຊອກວ່າ
ແມງໄມ້ໂຕໃດທີ່ທຳລາຍສວນຂອງເຮົາ
ບາງເທື່ອລູກອາດເອົາອັນນີ້ຈັບມັນໄດ້”  ແມ່ເຈັນດາບອກ.





ພໍແຕ່ຕື່ນ ທິດາຈັບເອົາສະຫວິງ
ມຸ່ງໜ້າໄປສວນ ເລາະໄປທຸກແຖວ
ໝາກຖົ່ວເຫຼືອງ ກວາດສະຫວິງ
ໄປມາ. ບໍ່ແມ່ນວຽກທີ່ງ່າຍປານໃດ.
ທິດາ ທັງຮ້ອນທັງເມື່ອຍ.





ເມື່ອທິດາມາເຮືອນ ເພື່ອເບິ່ງວ່າລາວຈັບຫຍັງໄດ້ແດ່ ມີແມງໄມ້ປະຫຼາດທີ່ລາວຫາກໍເຄີຍເຫັນຫຼາຍໂຕ. ບາງໂຕຄືມົດ ບາງໂຕເບິ່ງຄືແມງວັນ, ບາງໂຕເບິ່ງຄືດ້ວງ ແລະຫຼາຍໂຕພໍແຕ່ເປັນເມັດນ້ອຍໆ.



“ແມ່ຄຶດວ່າແມ່ນໂຕໃດທີ່ເຈາະຝັກຖົ່ວ?”

“ຈັ່ງວ່າເດີ້ ອີກຈັກສອງອາທິດ ບາດຝັກຖົ່ວເລີ່ມໃຫຍ່ ລອງໄປກວາດເອົາມາເບິ່ງອີກເນາະ.”





ເປັນການຄອງຖ້າທີ່ຍາວນານ, ທຸກໆມື້ ທິດາຫຽວໄປສັງເກດ
ແມງໄມ້. ຈົນເຊົ້າມື້ໜຶ່ງ ຕອນທີ່ພວມນັ່ງມິດໆສັງເກດເບິ່ງຕົ້ນ
ໝາກຖົ່ວ ລາວເຫັນບາງຢ່າງ.



ທິດາເຫັນແມງໄມ້ໂຕໜຶ່ງ ກິນແມງໄມ້ອີກໂຕໜຶ່ງ ຕໍ່ໜ້າຕໍ່ຕາ. ລາວຄຶດອີດູແມງໄມ້ທີ່ຖືກກິນ ແຕ່ທັນໃດນັ້ນ ລາວກໍຮູ້ເມື່ອວ່າ ມັນພວມຈັບຢູ່ເທິງຕົ້ນໝາກຖົ່ວທີ່ພວມໃຫຍ່ *'ແມ່ນໂຕນີ້ບໍ ທີ່ເຈາະຝັກໝາກຖົ່ວ'* ລາວເລີ່ມສົງໄສ.

ລາວສັງເກດຕົ້ນອື່ນໆ, ແມ່ນອີຫຼີ ແມງໄມ້ແນວດຽວກັນ ຈັບຢູ່ທຸກຕົ້ນ.

"ແມ່ນສູນີ້ເນາະ" ທິດາບອກໂຕເອງ.

ລາວຟ້າວແລ່ນເມືອເຮືອນ ໄປບອກແມ່.



"ແມ່! ເຮົາຮູ້ແລ້ວ ວ່າແມ່ນຫຍັງເຈາະຝັກໝາກຖົ່ວ! ເບິ່ງແມ໊!"
ທິດາທັງຮ້ອງ ທັງຍູ້ປະຕູ ແລະຖືພົ້ວໝາກຖົ່ວງາມໆ.

ແມ່ເຈັນດາລຸກຂຶ້ນຢືນ ເບິ່ງຄັກໆ. ລາວຕ້ອງຫິບຕາເຂົ້າ
ຈິ່ງເຫັນແມງໄມ້ໂຕນ້ອຍໆ ພວມຄານໄປມາຕາມພົ້ວໝາກຖົ່ວ
ທີ່ທິດາຖື.

"ພວກແມງໄມ້ທີ່ຈັບຢູ່ຕາມຝັກນີ້ລະ ມັນຕ້ອງແມ່ນໂຕທີ່
ທຳລາຍສວນຂອງເຮົາ!"

"ເກັ່ງຫຼາຍ ລູກແມ່" ແມ່ເຈັນດາຍ້ອງລູກ
"ບາດນີ້ ເຮົາຮູ້ແລ້ວວ່າ ໃຜເປັນໂຕການ"









"ເຮົາເຫັນແມງໄມ້ໂຕໃຫຍ່
ມາກິນແມງພວກນີ້ນຳ
ເຮົາເຫັນແມງໄມ້ຕັ້ງຫຼາຍແນວ
ຢູ່ສວນ ລູກວ່າ ພວກໂຕໃຫຍ່ໆ
ມັນຕ້ອງມາກິນແມງອັນນີ້ແຫຼະ!"
ທິດາເວົ້າຢ່າງຕື່ນເຕັ້ນ.

"ແມ່ນໄດ໋ເນາະລູກ ພວກແມງໄມ້
ໂຕໃຫຍ່ ຄືຊິມາຊ່ອຍເຮົາ. ແຕ່ຄື
ຈະຕາຍໝົດຕອນເຮົາ ສີດຢາ."

ທິດາກັບແມ່ເຈັນດາ ຢາກຄັກໃຈກັບ
ຄວາມຄິດຂອງໂຕ ເຂົາເຈົ້າໄດ້ຍິນວ່າ
ມີໂຮງຮຽນກະສິກຳຊາວບ້ານ ຢູ່ບ້ານ
ສຳລວດ ຈຶ່ງໄປຖາມຢູ່ຫັ້ນຕື່ມ.

ຄືທີ່ເຂົາເຈົ້າຄິດ ຄົນຢູ່ໂຮງຮຽນບອກວ່າ
ແມງໄມ້ໂຕນ້ອຍໆທີ່ທິດາເຫັນ ເປັນໂຕ
ທີ່ດູດນ້ຳລ້ຽງຈາກຝັກຖົ່ວເຫຼືອງ.







ມັນແມ່ນລູກແມງແຄງສີຂຽວ.
ມັນກໍມີສັດຕູຕາມທຳມະຊາດ
ທັງແມ່ກາຝາກແລະແມງໄມ້
ທີ່ກິນມັນເປັນອາຫານ.

ຊາວນາຄວນຕ້ອງໄດ້ເບິ່ງຄັກໆ
ວ່າມີແມງໄມ້ແນວໃດແດ່ໃນສວນ
ກ່ອນຈະຕັດສິນໃຈສີດຢາຂ້າແມງໄມ້
ເພາະຢາຈະຂ້າ ທັງພວກແມ່ກາຝາກ
ແລະແມງໄມ້ທີ່ກິນລູກມັນຈົນໝົດ.

ບາດພວກໂຕລູກທີ່ໜີລອດຄືນມາ
ມັນຈະແຜ່ພັນເພີ່ມຈຳນວນເປັນຫຼາຍ
ເທົ່າໂຕ ຍ້ອນບໍ່ມີສັດຕູຂອງມັນຢູ່ຫັ້ນ
ແລ້ວ.

ທິດາກັບແມ່ເຈັນດາ ຈຶ່ງດູແລສວນແບບທຳມະດາ
ພຽງແຕ່ໝັ່ນຫຼົກຫຍ້າ ແລະກວດກາວ່າ ມີ
ແມງໄມ້ຊະນິດໃດແດ່ ຢູ່ໃນສວນ.
ຝັກຖົ່ວເຫຼືອງຕຶ່ງເຕັມ ແກ່ນກ້ຽງສີເຫຼືອງນວນ.
ການເກັບກ່ຽວປີນັ້ນ ຈຶ່ງໄດ້ຜົນດີທີ່ສຸດ.





*‘ສວນຂອງຂ້ອຍມີຜູ່ດູແລ
ດີຢູ່ແລ້ວ.’* ທິດາບອກໂຕເອງ.

ເມື່ອຖົ່ວແກ່ເປັນກູ້, ເຈັນດາຂໍໃຫ້ໄທບ້ານ
ມາຊ່ອຍກູ້.

ມື້ນັ້ນ ທຸກຄົນມາແຕ່ເຊົ້າ ສີໜ້າສົດໃສ
ເວົ້າຍອກໄຍກັນຢ່າງມີຄວາມສຸກ.





ຜູ່ໃດກໍຕື່ນວ່າ ສວນໄທເຮືອນຄືໄດ້ຜົນປູກ
ຫຼາຍແທ້. ທິດາແລະແມ່ເຈັນດາ ຮູ້ດີວ່າ
ເປັນຍ້ອນການດູແລເອົາໃຈໃສ່ສວນ
ແລະການທີ່ມີແມງໄມ້ຫຼາຍຊະນິດ
ຊ່ອຍເບິ່ງແຍງແລະກິນສັດຕູພືດ.

ແຕ່ບໍ່ແມ່ນວ່າ ທຸກຄົນມີຄວາມສຸກແລ້ວ.





ປີນັ້ນ ໄທບ້ານຫຼາຍຄົນໄດ້ຜົນຜະລິດ
ໜ້ອຍຫຼາຍ. ບໍ່ມີໃຜເຂົ້າໃຈວ່າ ເປັນຫຍັງ
ຖົ່ວຄືບໍ່ງາມຄືສວນແມ່ເຈັນດາ. ທິດາ
ຢາກຊ່ອຍ ຈຶ່ງຂໍໃຫ້ແມ່ເຊີນໄທບ້ານມາ
ເຮືອນ. ທຸກຄົນທີ່ມາ ຟັງທິດາຢ່າງຕັ້ງໃຈ
ທິດາກໍເລົ່າທີ່ມາຂອງຜົນຜະລິດອັນສົມບູນ
ໃຫ້ຟັງ.

ທິດາອະທິບາຍໃຫ້ຟັງວ່າ ບໍ່ແມ່ນແມງໄມ້ທຸກຊະນິດ
ບໍ່ດີ ບາງໂຕເປັນປະໂຫຍດກັບຊາວສວນຫຼາຍ
ສະນັ້ນ ຈຶ່ງຢາກໃຫ້ລອງບໍ່ສີດຢາຂ້າແມງໄມ້ເບິ່ງ.
ລາວຍັງເອົາໂຕທີ່ທຳລາຍສວນຖົ່ວເຫຼືອງມາໃຫ້
ເບິ່ງ.





ທຸກຄົນຕັ້ງໃຈເບິ່ງລູກແມງແຄງສີຂຽວ ທີ່ຖືກຈັບ
ຢູ່ໃນຫຼອດນ້ອຍໆ ທີ່ທິດາເອົາໃຫ້ເບິ່ງໄຄ່ຄົນ.

ໄທບ້ານຮຽນຮູ້ທີ່ຈະກຳຈັດລູກແມງແຄງສີຂຽວ
ໂດຍບໍ່ຕ້ອງຂ້າແມງໄມ້ທີ່ມີປະໂຫຍດໄປນຳ.
ແມ່ເຈັນດາບອກວ່າ ການເບິ່ງແຍງສວນແບບທີ່
ຄອບຄົວເພິ່ນເຮັດ ເອີ້ນວ່າ 'ການຄວບຄຸມແມງ
ໄມ້ແບບບູຮະນາການ (IPM)*'

* ສາມາດເບິ່ງລາຍລະອຽດກ່ຽວກັບ IPM ໄດ້ ຢູ່ໜ້າ ໔໗.







“ຊັ້ນລະ ສະເຣດເອີຍ, ບໍ່ຕ້ອງຢ້ານດອກ
ເພາະເຮົາເບິ່ງແຍງສວນແບບ IPM.
ລູກແມງແຄງສີຂຽວດ້ານໜ້ອຍ ເຮັດຫຍັງ
ໝາກຖົ່ວເຫຼືອງຂອງເຮົາບໍ່ໄດ້ດອກ”
ຈໍຣະນີບອກນ້ອງຢ່າງສະບາຍໃຈ.

“ດຽວນີ້ ສວນເຮົາມີແມງໄມ້ຊະນິດດີແລ້ວ ຫວາ?”

“ມີລະເນາະ ຫາກບາງໂຕຫັ້ນນ້ອຍຫຼາຍ
ຈົນເຈົ້າເບິ່ງບໍ່ເຫັນດອກ”

“ພໍ່ແມ່ເຮົາໄປຮຽນເລື່ອງ IPM ມາແຕ່ໃສລະ”

“ເຈົ້າບໍ່ຈື່ຊັ້ນເບາະ ? ເຈົ້າຍັງນ້ອຍຫຼາຍ
ຕອນພໍ່ກັບແມ່ໄປເຮືອນທິດາຄືນນັ້ນ”

# ນີ້ແມ່ນສິ່ງທີ່ ທິດາແລະແມ່ເຈັນດາ ບອກກັບໄທບ້ານ.

## ແມງໄມ້ບໍ່ດີ

ນອກຈາກລູກແມງແຄງສີຂຽວ ຍັງມີແມງໄມ້ຊະນິດອື່ນອີກ ທີ່ເປັນໂຕທຳລາຍພືດສວນ.



ວົງຈອນການຈະເລີນເຕີບໂຕຂອງ *(Nezara viridula)*

ພວກທີ່ມັກເຈາະດູດນ້ຳລ້ຽງ ໄດ້ແກ່: ແມງແຄງເຕີຍ ແລະເພ້ຽ.

ໜອນທີ່ເກີດຈາກໄຂ່ແມງກະເບື້ອກາງຄືນຫຼາຍຊະນິດ ມັກກິນໃບ ເຈາະເຂົ້າໄປໃນຝັກຖົ່ວ ຫຼືໜ່ວຍໝາກໄມ້ ແລະກິນແກ່ນ.



Brown bean bug: ແມງແຄງເຄື່ອ
*(Riptortus linearis)*



Aphids: ເພ້ຽ



Caterpillar: ບົ້ງ



Moth: ແມງກະບີ້

# ແມງໄມ້ດີ

ມີຈຳພວກແມງໄມ້ທັງແມງມຸມຫຼາຍຊະນິດ ທີ່ກິນແມງໄມ້ອື່ນ ເປັນອາຫານ. ບາງແນວກໍໄຂ່ໃສ່ແມງໄມ້ອື່ນ (ແມ່ກາຝາກ) ພວກນີ້ ເອີ້ນວ່າ ແມງໄມ້ທີ່ເປັນປະໂຫຍດ ຫຼື ແມງໄມ້ດີ ເພາະມັນບໍ່ທຳລາຍພືດທີ່ປູກໃນສວນ.

ມີແມງວັນຫຼາຍຊະນິດ ທີ່ໄຂ່ໃສ່ໂຕແມງແຄງສີຂຽວ ໜອນຂອງແມງວັນເຕີບໃຫຍ່ ແລ້ວຈຶ່ງໝົ້ນອອກມາ ແມງໄມ້ທີ່ຖືກແມງວັນໄຂ່ໃສ່ ຈະຕາຍກາຍເປັນອາຫານຂອງໜອນ.

ຕໍ່ໂຕນ້ອຍໆບາງຊະນິດ ມັກໄຂ່ຊ້ອນໃສ່ໄຂ່ແມງແຄງສີຂຽວ ບາດໄຂ່ແຕກອອກມາ ແມ່ນລູກຕໍ່ອອກມາແທນລູກແມງແຄງ.

ແມງໄມ້ບາງແນວ ເຊັ່ນ ແມງມຸມ, ຕໍ່, ແມງມ້າ, ມົດ, ແມງເຕົ່າຄຳ, ແມງປີກແຂງ ແລະອື່ນໆ ມັກກິນແມງໄມ້ຫຼາຍຊະນິດ ເຊິ່ງສ່ວນໃຫຍ່ແມ່ນສັດຕູພືດ.



Parasitic fly: ແມງວັນ (ແມ່ກາຝາກ)
*(Trichopoda pennipes)*






Parasitic wasp: ຕໍ່ (ແມ່ກາຝາກ)
*(Trissolchus basalis)*



Lady beetle: ແມງເຕົ່າຄຳ



Predator wasp: ຕໍ່



Spider: ແມງມຸມ



Ant: ມົດ



Shield bug: ແມງປີກແຂງ



Praying mantid: ແມງມ້າ





# ບາດນີ້ແມ່ນທີເຈົ້າແລ້ວ.

ເລົ່າໃຫ້ຄົນເຮືອນຂ້າງຟັງ ກ່ຽວກັບ
ເລື່ອງ IPM ສ້າງຄວາມໝັ້ນໃຈໃຫ້
ໄທບ້ານສຳລວດທຸກຄົນ. ໃຫ້ເຂົາເຈົ້າ
ຈົ່ງແນງໄມ້ດີໆ ໄວ້ສູ້ກັບແມງແຄງ
ສີຂຽວ!



# ການຄວບຄຸມແມງໄມ້ແບບບູຣະນາການ (IPM)

IPM ແມ່ນວິທີການຄວບຄຸມແມງໄມ້ສັດຕູພືດ ແບບປະສົມປະສານ ເຊິ່ງຊ່ວຍໃຫ້ຊາວສວນ ຫຼຸດຜ່ອນການໃຊ້ຢາຂ້າແມງໄມ້ລົງ. ບາງວິທີການ ທີ່ໃຊ້ຄວບຄຸມແມງໄມ້ສັດຕູພືດ ໃນສວນຖົ່ວເຫຼືອງ ມີດັ່ງນີ້:

- ເບິ່ງແຍງໃຫ້ຕົ້ນຖົ່ວແຂງແຮງດີ
- ລົງມືປູກແຕ່ຕົ້ນລະດູການ ຫຼືກລ່ຽງຍາມທີ່ແມງໄມ້ແຜ່ຫຼາຍ.
- ຕິດຕາມເບິ່ງຈຳນວນແມງໄມ້ ສັງເກດລະດັບການທຳລາຍສວນຂອງມັນ.
- ຮັກສາແມງໄມ້ດີ ໄວ້ຕໍ່ສູ້ກັບແມງໄມ້ບໍ່ດີ.
- ໃຊ້ຢາຂ້າແມງໄມ້ໃນເມື່ອ ຈຳເປັນແທ້ໆ ແລະໃຊ້ຫຼາຍຊະນິດ ສະຫຼັບກັນ ແຕ່ລະເທື່ອ ເພື່ອຫຼີກເວັ້ນ ບໍ່ໃຫ້ແມງໄມ້ສັດຕູພືດ ລື້ງຢາຊະນິດໃດໜຶ່ງ.
- ຄວບຄຸມຫຍ້າ ເພາະຫຍ້າເປັນສິ່ງດຶງດູດແມງໄມ້ສັດຕູພືດ.
- ຫຼີກລ່ຽງການປູກພືດທີ່ດຶງດູດສັດຕູພືດ ລະຫວ່າງຮອບວຽນການຜະລິດ.
- ປູກພືດກັບດັກ (ພືດທີ່ແມງໄມ້ມັກ) ປົ່ນສວນຖົ່ວເຫຼືອງ ເພື່ອໃຫ້ສັດຕູພືດໄປຫາພືດກັບດັກຫຼາຍກວ່າ.
- ລົມກັບຊາວສວນຄົນອື່ນ ໃຫ້ເຂົ້າໃຈນຳກັນ ເພື່ອການຄວບຄຸມແມງໄມ້ ຢ່າງໄດ້ຜົນ ໃນວົງກວ້າງ.
- ເລືອກພືດຊະນິດທີ່ທົນທານຕໍ່ພະຍາດແລະສັດຕູພືດ.

# ໂຮງຮຽນຊາວນາ

ແມ່ນໂຮງຮຽນທີ່ບໍ່ມີຫ້ອງ ບໍ່ມີຝາ, ໃນຕົວຈິງ ໂຮງຮຽນ ຊາວນາ ແມ່ນການໂຮມໂຕກັນຂອງ ຊາວນາ-ຊາວສວນ (ປະມານ 30 ຄົນ ຂຶ້ນໄປ) ໃນບ້ານ. ເຂົາເຈົ້າພົ້ກັນ ອາທິດລະເທື່ອ ຕະຫຼອດລະດູການປູກຝັງ ເພື່ອມາໂອ້ລົມ ແລກປ່ຽນກັນ ກ່ຽວກັບ IPM ເພື່ອຫຼຸດຜ່ອນການໃຊ້ຢາຂ້າ ແມງໄມ້ ແລະການເຮັດສວນ ຢ່າງຍືນຍົງ.

ທ່ານສາມາດສຶກສາເລື່ອງ IPM ຈາກຖານຂໍ້ມູນຂອງ ກົມການກະເສດແລະທີ່ດິນກະສິກຳ, ກະຊວງ ກະສິກຳ, ປ່າໄມ້ ແລະການປະມົງ ກຳປູເຈຽ **(www.maff.gov.kh/eng/depts/daald.html)**

# ຄຳຂອບໃຈ

ປຶ້ມຫົວນີ້ ໄດ້ຮັບແຮງບັນດານໃຈ ຈາກຊາວບ້ານ ສຳລວດ ເຊິ່ງຕັ້ງຢູ່ທາງພາກຕາເວັນຕົກສຽງເໜືອ ຂອງປະເທດກຳປູເຈຍ. ປະຊາຊົນເຂດດັ່ງກ່າວ ໄດ້ນຳເອົາຄວາມຄິດກ່ຽວກັບການຄວບຄຸມແມງໄມ້ແບບບູຣະນາການ (IPM) ໄປໃຊ້ຢ່າງຈິງຈັງ.

ພວກເຮົາຂໍຂອບໃຈ ບັນດາຜະແນກສຶກສາແຂວງ, ຫ້ອງການສຶກສາເມືອງ ໃນປະເທດ ກຳປູເຈຍ. ຂໍຂອບໃຈ ຄູອາຈານ, ນັກຮຽນ ແລະ ຄະນະອຳນວຍການໂຮງຮຽນ ເພື່ອການພັດທະນາ ແຫ່ງສະຫະສະຫວັດ MJP ບ້ານສຳລວດ. ທ່ານພົນ ຈັນທີ, ທ່ານ
ນິນ ຊາຍາ ແລະ ທ່ານ ປິນ ທາຣາ ທີ່ໄດ້ແປຕົ້ນສະບັບປຶ້ມຫົວນີ້ ເປັນພາສາຂະແມ. ແລະຂໍຂອບໃຈ ACIAR ຜູ່ອຸປະຖຳທຶນ ສຳລັບວິໄຈ ແລະຈັດພິມປຶ້ມຫົວນີ້.

ສະບັບພາສາລາວ ທີ່ທ່ານພວມອ່ານຢູ່ ແມ່ນຜົນງານການແປ ຂອງ ທ່ານ ສຸກພັນສາ ພູຜາສຸກ ແລະ ທ່ານນາງ ດາຣາ ກັນລະຍາ ແຫ່ງ ສະມາຄົມ ຮ່ວມນໍ້າໃຈກັບ

ກະຊວງສຶກສາທິການ ຊາວໜຸ່ມ ແລະ ກິລາ ແຫ່ງຣາຊະອານາຈັກກຳປູເຈຽ ໄດ້ອະນຸຍາດ ໃຫ້ ມູນນິທິ Maddox Jolie-Pitt (MJP) ເພື່ອສ້າງຕັ້ງ “ສະໂມສອນພິທັກສິ່ງແວດລ້ອມ (Eco-Ranger Club)” ໃນສີ່ໂຮງຮຽນເປົ້າໝາຍ ໃນເມືອງສຳລວດ ແຂວງພະຕະບອງ.

ປື້ມຫົວນີ້ ເປັນຜົນໄດ້ຮັບສ່ວນໜຶ່ງ ຂອງ ສະໂມສອນພິທັກສິ່ງແວດລ້ອມ. ເປັນເຄື່ອງມືເພື່ອສອນເດັກນ້ອຍ ເລື່ອງການຄວບຄຸມແມງໄມ້ແບບບູຣະນາການ (IPM) ແລະຜົນດີຕໍ່ສິ່ງແວດລ້ອມ ຂອງ IPM. IPM ຈະຊ່ວຍຫຼຸດຜ່ອນການໃຊ້ຢາຂ້າແມງໄມ້ ເຊິ່ງຈະເປັນຜົນດີ ແກ່ຮ່າງກາຍຂອງຊາວສວນ ແລະສິ່ງແວດລ້ອມ. ເດັກເຂົ້າໃຈສິ່ງເຫຼົ່ານີ້ໄດ້ດີ ແລະນຳແນວຄວາມຄິດນີ້ ໄປບອກພໍ່ແມ່ຕໍ່.

ພວກເຮົາວາງແຜນໄວ້ວ່າ ປື້ມຫົວຕໍ່ໄປ ຈະເວົ້າກ່ຽວກັບຜົນດີຂອງການຢຸດເຊົາ ການຖາງປ່າເຮັດໄຮ່ ແລະຜົນດີຂອງການຮັກສາສັດປ່າ ທີ່ອາໄສຢູ່ໃກ້ກັບບ້ານຄົນ.

ຢຸດເຊົາການຊື້ຂາຍໄມ້ ແລະ ສັດປ່າ ຜິດກົດໝາຍ. ມາຊ່ວຍກັນຮັກສາ ເຂດອະນຸຮັກຊີວະນາໆພັນສຳລວດ ໄວ້ໃຫ້ລູກຫຼານຮຸ່ນຕໍ່ໄປ.

Stephan Bognar, ອຳນວຍການ ອາວຸໂສ MJP





ACIAR
www.aciar.gov.au

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC)

ດອກເກດ
DokkeD